**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມລ້ຽງສັດ ແລະ ການປະມົງ

ເລກທີ 3071 /ກລປ
ນະຄອນຫຼວງວຽງຈັນ, ວັນທີ 30 JUL 2026

# ໜັງສືປະກາດ

**ເລື່ອງ:** ປະກາດຮັບສະໝັກ ບຸກຄະລາກອນ ປະຈຳໂຄງການ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 1246/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ສັນຍາກູ້ຢືມ ແລະ ຊ່ວຍເຫຼືອລ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ທະນາຄານພັດທະນາອາຊີ (ADB) ສະບັບເລກທີ ADB Loan No. 4542-LAO (COL), Grant No. 0994-LAO (SF) and Grant No. 0995- LAO (CCF), ລົງວັນທີ 12 ທັນວາ 2024;

ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍປະກາດຮັບສະໝັກບຸກຄະລາກອນປະຈຳໂຄງການ ປັບປຸງການຄວບຄຸມພະຍາດສັດ ແລະ ການລ້ຽງສັດເປັນສິນຄ້າ ຕາມແລວຊາຍແດນ. ໂຄງການດັ່ງກ່າວໄດ້ຮັບທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຈາກທະນາຄານພັດທະນາອາຊີ (ADB) ລວມມູນຄ່າ 42 ລ້ານໂດລາສະຫະລັດ, ໃນນີ້ປະກອບມີທຶນກູ້ຢືມ 30 ລ້ານໂດລາສະຫະລັດ, ທຶນຊ່ວຍເຫຼືອລ້າ 12 ລ້ານໂດລາສະຫະລັດ ແລະ ທຶນຊ່ວຍເຫຼືອລ້າຈາກກອງທຶນການປ່ຽນແປງດິນຟ້າອາກາດ ຈຳນວນ 0.9 ລ້ານໂດລາສະຫະລັດ, ໂດຍມີໄລຍະການຈັດຕັ້ງປະຕິບັດໂຄງການ 7 ປີ (2025–2032).

ດັ່ງນັ້ນ,ໃນໄລຍະໃນການຈັດຕັ້ງປະຕິບັດນີ້, ໂຄງການຈຶ່ງມີຄວາມຕ້ອງການຮັບສະໝັກບຸກຄະລາກອນ (ຄົນລາວ) ທີ່ມີຄຸນສົມບັດເໝາະສົມ ເຂົ້າຮ່ວມງານໃນ 01 ຕຳແໜ່ງ ຄື: ບັນຊີໂຄງການ (Project Accountant) ປະຈຳຢູ່ຫ້ອງການຂອງໂຄງການທີ່ຂຶ້ນກັບ ກົມລ້ຽງສັດ ແລະ ການປະມົງ, ໂດຍຜູ້ສະໝັກຕ້ອງມີເງື່ອນໄຂປະສົບການດ້ານການເງິນ-ການບັນຊີຫຼາຍກວ່າ 03 ປີ. ຜູ້ສົນໃຈສະໝັກໃນຕຳແໜ່ງດັ່ງກ່າວ ກະລຸນາສົ່ງໃບສະໝັກງານ (Application Letter) ພ້ອມດ້ວຍປະຫວັດຫຍໍ້ (CV) ເຖິງ ທ່ານ ທອງຄູນ ຄ່ອງຫຼ້າລ່ຽນ, ຫົວໜ້າປະສານງານໂຄງການ ຄສຊ, ກົມລ້ຽງສັດ ແລະ ການປະມົງ, ອີເມວ: thongkh.kl@gmail.com ແລະ ນາງ ວານິດາ ທອງພັນມະຫາ, ຊ່ຽວຊານບັນຊີ-ການເງິນ, ອີເມວ: vannidathongphan@gmil.com. ກຳນົດຮັບໃບສະໝັກແຕ່ວັນທີເລີ່ມປະກາດຈົນເຖິງວັນທີ 10 ສິງຫາ 2026 ເວລາ 16:00 ໂມງ (ສ່ວນລາຍລະອຽດຢູ່ໃນໃບສະໝັກ Request for Expression of Interest Project Accountant ສະບັບເລກທີ 2877/DLF, ລົງວັນທີ 24/07/2026) .

ດັ່ງນັ້ນ, ຈຶ່ງປະກາດມາທ່ານທີ່ມີຄວາມສົນໃຈຮ່ວມງານໃນຕຳແໜ່ງດັ່ງກ່າວເພື່ອຊາບ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມລ້ຽງສັດ ແລະ ການປະມົງ

ບົວທົງ ຄຳຫາ